# ອນຸສີຣຕ໌



ມຫາແກ້ວ ຈັນທະສິຣິ

# ປວັດຫຍໍ້

## ຂອງ

## ມຫາແກ້ວ ຈັນທະສີຣິ

ທ່ານມຫາແກ້ວ ຈັນທະສີຣິ ເກີດເມື່ອວັນທີ ໖ ເດືອນກັນຍາ ຄ.ສ.໑໙໔໑ ເປັນບຸດຣ໌ຄົນທີສາມ ຂອງ ພໍ່ ແຜ່ນ ຈັນທະສີຣິ (ຕ) ແລະແມ່ ໜູນາງ (ຕ) ພູມລຳເນົາເກີດທີ່ບ້ານໄຣ່ຊຽງແລ ແຂວງ ວຽງຈັນທນ໌, ປເທສລາວ.

ທ່ານມຫາແກ້ວ ມີອ້າຍ ໑ ຄົນ ແລະເອື້ອຍ ໑ ຄົນ ປັຈຈຸບັນຢູ່ ນຄອຣວຽງຈັນທນ໌, ທ່ານມຫາແກ້ວ ເມື່ອຍັງເປັນເດັກຢູ່ນັ້ນ ມີຮູປລັກສະນະເປັນທີ່ຮັກແພງຂອງພໍ່ແມ່ແລະຍາຕິພີ່ນ້ອງ ພ້ອມທັງເປັນເດັກທີ່ເຊື່ອຟັງຖ້ອຽຄຳພໍ່ແມ່ສເໝີມາ ເມື່ອມີອາຍຸໄດ້ ໑໑ປີ ສົມຄວຣຈະບວຊໄດ້ ພໍ່ແມ່ແລະຍາຕິພີ່ນ້ອງກໍໄດ້ຈັດການບັພຊາເປັນສາມເນຣ ໃຫ້ຢູ່ວັຕບ້ານໄຣ່ຊຽງແລ ແລ້ວໄດ້ສຶກສາຮ່ຳຮຽນພຸທທະວະຈະນະເປັນລຳດັບມາ

ໃນປີ ຄ.ສ.໑໙໔໘ ໄດ້ເຂົ້າໄປສຶກສາຢູ່ທີ່ວັຕອິນຣ໌ແປງ ເມື່ອອາຍຸໄດ້໒໐ ປີເຕັມ ກໍໄດ້ອຸປສົມບົທເປັນພຣະພິກຂຸສົງຄ໌ ແລະໄດ້ເຂົ້າໂຮງຮຽນປຣິຍັຕິທັມຕຽອດມາຈົນຈົບຊັ້ນມັທຍົມ ໓(ປໂຍຄ ໖) ຢູ່ທີ່ວັຕອົງຄ໌ຕື້ ນຄອຣວຽງຈັນທນ໌, ທ່ານໄດ້ຮຽນສິລປະກັມວັຕຖຸບູຮານ ຊຶ່ງມີອາຈາຣຍ໌ ທິດພຸ ເປັນຜູ່ສອນ.

ໃນປີ ຄ.ສ.໑໙໖໐ ເມື່ອໄດ້ສິກຂາລາເພທແລ້ວ ກໍເຂົ້າຮັບໃຊ້-

ພາຣະກິຈຊາດເປັນຄູປະຊາສຶກສາແລະໄດ້ຖືກສົ່ງໄປສອນຢູ່ແຂວງຊຽງຂວາງ.

ໃນປີ ໑໙໖໕ ໄດ້ຖືກໂອນເຂົ້າເປັນທຫານຢູ່ຝ່າຍເປັນກາງ ແລ້ວຍ້າຍໄປປະຈຳຢູ່ກອງບັນຊາການພາຄ ໓ ທີ່ສວັນເຂດ ຊຶ່ງມີທ່ານ ພ.ຕ.ຄຳຕັນ ເປັນ ຜ.ບ.

ໃນເດືອນເມສາ ວັນທີ ໑໖, ປີ ຄ.ສ. ໑໙໖໙ ທ່ານ ມຫາແກ້ວ ກໍໄດ້ລາອອກຈາກທຫານ, ແລ້ວໄປເປັນພນັກງານແປພາສາ (ພາສາ) ໃຫ້ຍີ່ປຸ່ນ (ຍີ່ປຸ່ນ) ທີ່ສ້າງເຂື່ອນນ້ຳງື່ມຂອງບໍຣິສັທ ຮາຊາມາ (HAZAMA) .

<u>ແຕ່ງງານ</u>: ທ່ານມຫາ ແກ້ວ ຈັນທະສີຣິ ໄດ້ແຕ່ງງານກັບນາງບົວໄລ ໃນເດືອນພຶສຈິກາ ປີ ຄ.ສ. ໑໙໗໐ ທີ່ ນຄອຣວຽງຈັນທນ໌ ໄດ້ມີລູກນຳກັນ ໓ ຄົນ ເປັນຊາຍ ໑ ແລະເປັນຍິງ ໒ ຄົນ, ລູກກົກຊື່ວ່າ ທ້າວ ແອ ປັຈຈຸບັນ ອາຍຸ ໒໙ ປີ ແລະໄດ້ແຕ່ງງານໄປແລ້ວ ມີລູກ ໒ ຄົນ ເປັນຊາຍທັງສອງ.

ລູກສາວຜູ້ທີ ໒ ຊື່ນາງ ຈັນທຣາ ມີອາຍຸ ໒໖ ປີ ຍັງບໍ່ທັນແຕ່ງງານເທື່ອ ປັຈຈຸບັນໄດ້ປຣິນຍາໂທຝ່າຍກົດໝາຍ ແລະຍັງສຶກສາຕໍ່ເພື່ອຈະເອົາປຣິນຍາເອກ.

ລູກສາວຜູ້ທີ ໓ ຊື່ນາງ ຕິ໋ມ ອາຍຸ ໒໓ ປີ ຍັງບໍ່ທັນແຕ່ງງານ ແລະພວມຮຽນກົດໝາຍ ເໝືອນກັນກັບເອື້ອຍ.

ໃນປີ ຄ.ສ. ໑໙໗໕ ປະເທສລາວຖືກຍຶດເປັນເມືອງຂຶ້ນຂອງແກວຄອມມູຍນິສຕ໌, ທ່ານ ມຫາແກ້ວ ກໍຖືກຈັບແລ້ວສົ່ງໄປຂັງຄຸກສຳເຄຍູ່ເມືອງວຽງໄຊຍ໌ ດ້ວຍການຮູ້ຈັກໃຊ້ສຕິປັນຍາ ທ່ານ ມຫາ ແກ້ວ ຈຶ່ງ

ຈຶ່ງສາມາດເອົາຊີວິດລອດຈາກຄວາມຕາຍມາໄດ້, ໃນວັນທີ ໑໗ ເດືອນສິງຫາປີ ຄ.ສ. ໑໙໗໗. ແລ້ວໄດ້ເອົາຄອບຄົວໂດນຂ້າມແມ່ນ້ຳຂອງເພື່ອເຂົ້າສູນຍ໌ພອງຄາງ ປະເທສໄທຽ ໃນວັນທີ ໕ ເດືອນທັນວາ ປີ-ຄ.ສ. ໑໙໗໗.

<u>ຕັ້ງຖິ່ນຖານໃໝ່ໃນປະເທສທີ ໓</u>: ໃນປີ ຄ.ສ.໑໙໗໘ ວັນທີ ໔໓ ທ່ານ ມຫາ ແກ້ວ ພ້ອມດ້ວຍຄອບຄົວໄດ້ເດີນທາງມາຕັ້ງຖິ່ນຖານໃໝ່ໃນປະເທສທີ ໓ ຄື ສຫາຣັຖອາເມຣິກາ ຣັຖແມສຊາຈູເສັດ. ແລະໄດ້ເສັງເອົາໃບປະກາສນິຍະບັດຂັ້ນ ຈີ.ອີ.ດີ. (G.E.D).

<u>ການປະກອບອາຊີພເພື່ອລ້ຽງຄອບຄົວ</u> : ໃນວັນທີ ໑໐ ເດືອນທັນວາ ໑໙໗໘ ທ່ານ ມຫາແກ້ວ ໄດ້ເຂົ້າທຳງານຢູ່ ບໍຣິສັທ ຣາບິນຊັນ. (Robinson) ແລະໄດ້ອອກພັກງານໃນຣະຍະໜຶ່ງ ເນື່ອງຈາກວ່າສຸຂພາພຂອງທ່ານຍັງບໍ່ທັນສົມບູຣນ໌, ໃນວັນທີ ໓໑ ເດືອນກັນຍາ - ຄ.ສ.໑໙໗໐ ຈຶ່ງໄດ້ກັບເຂົ້າທຳງານ, ໃນວັນທີ ໕ ເດືອນພືສຈິກາ ປີ ຄ.ສ. ໑໙໗໐ ທ່ານໄດ້ໄປເຮັດງານຢູ່ (Shipyard) ແລະໄດ້ກັບຄືນມາທຳງານທີ່ບໍຣິສັທ ຣາບິນຊັນ ອີກ, ຈົນທ່ານໄດ້ເສັຽຊີວິຕລົງໃນວັນທີ ໗ ເດືອນມິຖຸນາ ປີ ຄ.ສ.໑໙໙໙ ເວລາ ໔໓ໂມງ ໓໐ນາທີ ດ້ວຍໂຣຄຫົວໃຈວາຍ.

<u>ຜົລງານທາງການເມືອງແລະສັງຄົມລາວ</u> :

ທ່ານ ມຫາແກ້ວ ຈັນທະສີຣິ ຫລັງຈາກໄດ້ມາຢູ່ປະເທສອາເມຣິກາແລະໄດ້ຮັບຄວາມສຸຂທຸກດ້ານ ແຕ່ທ່ານເອງກໍ່ຍັງບໍ່ໄດ້ຫລົງໄຫລນຳວັຕຖຸນິຍົມ ແລະສັງຄົມຂອງຊາຕອື່ນ ດ້ວຍແນວຄິດຊາຕນິຍົມອັນບໍ່ມີວັນທີ່

ປຸ່ນນັ້ນ ແລະເຫັນແຈ້ງນຳຄວາມທຸກຂ໌ຍາກຂອງຄົນລາວທົ່ວປເທສນັ້ນ ເນື່ອງມາຈາກການກົກໜັງສື ເພາະວ່າຢູ່ປເທສລາວທັງສອງຣະບອບ ການປົກຄອງນັ້ນ ແມ່ນຣັຖບາລບໍ່ໄດ້ສົ່ງເສີມການສຶກສາໃຫ້ທົ່ວເຖິງ ເຂດຊົນນະບົດ ແລະເພື່ອບໍ່ໃຫ້ບົທຮຽນນັ້ນຊ້ຳຮອຍ ທ່ານມຫາແກ້ວ ໄດ້ ອາສາສມັກເປັນຄຣູສອນພາສາລາວ ຢູ່ວັດລາວຟີສເບີກ ຊຶ່ງມີ ມຫາ-ຄຳແພງ ເປັນເຈົ້າອາວາທ ແລະສອນພາສາລາວຢູ່ວັດໄລແວວລ໌ ຊຶ່ງ ມີຍາພໍ່ ຄຳອານ ເປັນເຈົ້າອາວາທ.

ທ່ານ ມຫາແກ້ວ ໄດ້ເຂົ້າເປັນສມາຊິກ ລາວຮ່ວມເສຣີພາພ ໃນປີ ຄ.ສ.໑໙໙໐ ໃນນາມເປັນຜູ່ຊ່ວງຄົ້ນຄວ້າພາສາສາຕຖ໌ (ພາສາປາລີ ແລະ ສັນສກິຕ) ທ່ານ ມຫາແກ້ວ ໄດ້ແປໜັງສືພຸທທະປວັດ ຈາກພາ ສາອັງກລິສ ມາເປັນພາສາລາວ ທີ່ຍາພໍ່ ຄຳອານ ເປັນຜູ່ມອບໜ້າທີ່ໃຫ້ ແປ ແລະຈັດພິມພ໌ໃນປີ ຄ.ສ. ໑໙໙໑ ທີ່ສຳນັກພິມພ໌ ລາວເສຣີຊົນ ຊຶ່ງເປັນປຶ້ມທີ່ຄົນລາວຊາວພຸທທັງຫຼາຍຄວນຊອກອ່ານ. ທ່ານ ມຫາ ແກ້ວ ໄດ້ລາອອກຣະຍະໜຶ່ງເນື່ອງຈາກວ່າສຸຂພາພບໍ່ສົມບູຣນ໌ຈົນໄດ້ ຖືກຜ່າຕັດ ຫລັງຈາກນັ້ນທ່ານເຫັນວ່າສຸຂພາພດີຂື້ນມາແນ່ ທ່ານກໍກັບ ເຂົ້າຮ່ວມພາຣະກິຈຊາຕຕາມເດີມ.

ໃນປີ ຄ.ສ.໑໙໙໗ ທ່ານໄດ້ອອກແບບໂຕໜັງສືລາວ ແລະໃຫ້ຄົບ ໔໑ ຕົວ ຕາມອັກຂຣະວິຣີ ທີ່ພິມພ໌ຂື້ນໃນປີ ໑໙໓໔. ແລ້ວໃຫ້ນັກຮຽນ ຂອງເພິ່ນເອົາປະກອບເຂົ້າແຜ່ນອັກສອຣ ຄືຕົວໜັງສືທີ່ທ່ານພວມອ່ານຢູ່ ນີ້ເອງ, ທ່ານມຫາແກ້ວ ຍັງໄດ້ສົມທຽບພຍັນຊນະລາວ ໃຫ້ຖືກກັບສຽງ ພຍັນຊນະສັນສກິຕ.

ໃນປີ ໑໙໙໙ ທ່ານ ມຫາແກ້ວ ໄດ້ເຂົ້າເປັນສມາຊິກ ນິຕຍະສາຣ

ແຜ່ນດິນລາວ, ໃນວັນທີ ໑໓ ເດືອນມີນາ ໑໙໙໙ ໄດ້ມີກອງປະຊຸມ ເພື່ອຈັດຕັ້ງຄນະກັມການຮັກສອຣສາດາ ຢູ່ຣັຖຄອນເນັກຕິກັດ ເມືອງ ແມນແສສເຕີຣ໌ ແລະທ່ານໄດ້ຖືກຄນະເລືອກເອົາເປັນປະທານ.

ທ່ານ ມຫາແກ້ວ ຈັນທະສີຣິ ເກີດມາໃນຊາຕິນີ້ ນັບວ່າບໍ່ເສັຽພົບ ເສັຽຊາຕິ ໄດ້ເປັນພຸທທະມາມະກະຊົນພ່າເພັງຕົນຢູ່ໃນຫຼັກສິລທັມມ໌ ລ້ຽງຄອບຄົວດ້ວຍຄວາມບໍຣິສຸທ.

ບັ້ນປາຍຂອງຊີວິດ ເມື່ອວັນທີ ໗ ເດືອນມິຖຸນາ ໑໙໙໙ ເຫດຸ ການອັນບໍ່ຄາດຝັນກໍ່ບັງເກີດຂື້ນຢ່າງກະທັນຫັນ ຄືເປັນໂຣຄຫົວໃຈວາຍ ສິ້ນລົມຫາຍໃຈໃນເວລາ ໘໓:໓໐ ນາທີ ຢູ່ທີ່ບໍຣິສັທ ຣາບິນຊົນ.

ລວມອາຍຸໄດ້ ໔໗ ປີ

ເນື່ອງໃນໂອກາສທຳບຸນຍ໌ ໑໐໐ ວັນ

ເດືອນພຶສຈິກາ ວັນທີ ໖ ຄ.ສ.໑໙໙໙

14 Rantoul St
Beverly, M A . 01915
Tel: (978) 927-8796

# ຄອບຄົວ ຈັນທະສີຣິ

## ຄຳອຸທິສ

ເນື່ອງໃນງານບຸນຄົບຮອບ ໑໐໐ ວັນນີ້ ຜູ້ຂ້າພ້ອມຄອບຄົວໄດ້ນ້ອມນຳເອົາ ສັງໂຍຊນ໌ ໑໐ ຢ່າງ ຊຶ່ງເປັນຄຳສອນຂອງພຣະພຸທອົງຄ໌ໄດ້ຫຼົງສັ່ງສອນໄວ້ ເພື່ອຫວັງປົດປ່ອຍສັດວ໌ໂລກທີ່ຍັງວົນວຽນຢູ່ໃນວັຕ-ສົງສາຣ ຜູ້ຂ້າພ້ອມດ້ວຍລູກຫຼານ ແລະຍາຕິພີ່ນ້ອງຈຶ່ງໄດ້ທຳເປັນປຶ້ມດ້ວຍຄວາມຫວັງວ່າຜົລຜູງກຸສົລ ທີ່ເກີດຂຶ້ນຈາກການກະທຳເປັນທານນີ້ຈຶ່ງຂໍອຸທິສສ່ວນກຸສົລໄປຍັງ "ມຫາ ແກ້ວ ຈັນທະສີຣິ " ຊຶ່ງໄດ້ລ່ວງລັບໄປສູ່ປະຣະໂລກເບື້ອງໜ້າແລ້ວນັ້ນ ຂໍຈົ່ງໄດ້ຮັບຍັງສ່ວນກຸສົລເຫຼົ່ານີ້ຕາມມະໂນເຈຕນາຂອງຜູ້ຂ້າ ຖ້າຕົກທຸກຂ໌ ກໍຂໍໃຫ້ພົ້ນຈາກທຸກຂ໌ໄປສເວີຍສຸຂນະດິນແດນສຸຂວະດີພິພົບສວັຣຄ໌ ຕາມອຳນາຈບຸນກຸສົລຜົລທັມມະທານຂອງພວກຂ້າດັ່ງນີ້ເທີ້ນ.

ອິທໍເມທມຸມທານໍອາສວຄຍາວທໍ
ນິພພານສັງຂາຕໍໂທຕຸອນາຄເຕກາເລ.

ໜ້າງ ບົວໄລ ຈັນທະສີຣິ ພ້ອມຄອບຄົວ.

ເຊືອກມັດຄໍ ຂອງພວກເຮົາ      ຣົບໂຣມ ໂດຽ ຈັນທະນະ

# ສັງໂຍຊນ໌ ໑໐ ຢ່າງ.

( ປ. ສໍໂຍຊນ໌, ສຌໂຌຊນ. ສ. ສໍໂຍຊນ )

---

ສັງໂຍຊນ໌: ມາຈາກພາສາປາລີ ແລະສັນສກຼິຕ ມີສອງພຍາງຄ໌ ເປັນຄຳໜຶ່ງ. ຄຳວ່າ ສັງໂຍຊນ໌ ແປເປັນພາສາ ( ອ່ານ ພາສາ) ລາວຂອງພວກເຮົາກໍ່ໄດ້ຄວາມໝາຍວ່າ ເຄື່ອງພົວພັນຘ໌, ເຄື່ອງຜູກມັດ ເພື່ອເຮັດໃຫ້ພວກເຮົາຫລຸດພົ້ນໄປບໍ່ໄດ້. ເພາະວ່າພວກເຮົາມີສິ່ງບັງຄັບໂດຽທາງອ້ອມຢູ່ໃນມັນສມອງ ຄື: ກິເລສ ກິເລສເປັນພາສາປາລີ ແປວ່າ ຄວາມຢາກ, ໂລພ, ໂກຘ, ຫລົງໄຫລ. ໃນເມື່ອກິເລສນີ້ເຂົ້າຄອບຄຸມສມອງແລ້ວ ມັນກໍ່ບັງຄັບໃຫ້ໃຈເຮົາທຳທຸກຢ່າງທີ່ມັນຕ້ອງການ ຈົນກາຽມາເປັນເຊືອກຜູກຄໍພວກເຮົາໄວ້ໃນວັຕສົງສານ ບຸຄຄົລໃດຊອກຫາທາງກຳຈັດມັນອອກຈາກສມອງໄດ້ໝົດ ກໍ່ກາຽເປັນພຼະອຣຫັນຕ໌ ຖ້າຜູ້ໃດບໍ່ສມາຖທຳລາຽ ຫຼື ບໍ່ຮູ້ວ່າແມ່ນຫຍັງບັງຄັບໃຈຂອງຕົນແລ້ວ ບຸຄຄົລນັ້ນກໍ່ກາຽເປັນຂ້າທາສຂອງ ສັງໂຍຊນ໌ກິເລສ ຕຼອດການ.

ສັງໂຍຊນ໌ກິເລສ ໑໐ ຢ່າງນັ້ນ: ມີດັ່ງຕໍ່ລົງໄປນີ້ ຖ້າບຸຄຄົລໃດ

ຫາກເຫັນວ່າຕົນເອງມີຢ່າງໃດຢ່າງໜຶ່ງ ໃນຈຳນວນ ໑໐ ຢ່າງທີ່ຈະກ່າວຕໍ່ໄປນີ້ ໃຫ້ຣີບທຳລາຍຖິ້ມໄວໆ ຢ່າໃຫ້ມັນມາເປັນນາຍ.

*__໑/. ສັກກາຍະທິຍຖິ :__* ( ປ. ສກຸກາຍທິຍຖິ ) ແປເປັນພາສາລາວ ກໍມີຄວາມໝາຍເລິກ ຈົນຫຼາຍຄົນບໍ່ຮູ້, ບໍ່ເຂົ້າໃຈແລະບໍ່ຮູ້ວ່າມັນຢູ່ນຳຕົນເອງ ຫຼືຢູ່ນຳຄົນອື່ນ. ສັກກາຍະທິຍຖິ ແປວ່າ ຄວາມຖືຕົນຖືໂຕ, ຂົ່ມເພິ່ນຍໍໂຕ, ເວົ້າຫຼັງຕ້ອງຍ້ອງຍໍຕົນເອງວ່າແຕ່ຕົນດີກວ່າໝູ່ທັງໝົດ, ຄັນມີໝາກຜົລເກີດຂຶ້ນມາ ກໍວ່າຕົນເປັນຜູ້ເຮັດມັນຈຶ່ງສຳເຣັຈ, ຖ້າເວົ້າເຖິງການຈັດຕັ້ງທາງສັງຄົມ ແລະການເມືອງເພິ່ນກໍຕ້ອງການເປັນປະທານ ແລະຕ້ອງການເອົາການຈັດຕັ້ງຂອງເພິ່ນນັ້ນເປັນສູນກາງໂລດ, ຖ້າວ່າມີຄົນອື່ນເຊື້ອເຊີນເພິ່ນໄປໃນງານສັງຄົມປະເພດີ ແມ່ນເພິ່ນຕ້ອງການຫຼາຍເພາະຈະໄດ້ໄປຍ້ອງຍໍຕົນເອງຢູ່ຕໍ່ໜ້າມວລຊົນ.

ເຊື້ອກິເລດ ສັກກາຍະທິຍຖິ ຂໍ້໑ ແມ່ນເປັນອັນຕຣາຍຫຼາຍ ແກ່ວົງສັງຄົມຂອງມນຸສ ເຮັດໃຫ້ແຕກແຍກກັນກໍຍ້ອນຄົນທັງຫຼາຍນີ້ ມີ *__ສັກກາຍະທິຍຖິ__* ຢູ່ໃນຕົວ ເມື່ອພວກເຮົາຮູ້ເຖິງຄວາມໝາຍອັນນີ້ແລ້ວ ຄວນພາກັນທຳລາຍຖິ້ມ ແລະລ້າງສົບລ້າງປາກໃຫ້ສອາດ.

*໔. ວິຈິກິຈສາ :* ( ອ່ານ ວິຈິກິດສາ ) ປາລີ ແລະສັນສກິດ ( ວິຈິກິຈສາ ) ແປໄດ້ຄວາມໝາຍວ່າ ຄວາມສົງໄສ, ບໍ່ແນ່ນອນ, ບໍ່ກ້າຕັດສິນໃຈ ເຮັດວຽກຮ່ວມສັງຄົມນຳໝູ່ກໍເຮັດແບບແປງບາງໆ ໝາຍຄວາມວ່າ ບໍ່ເອົາຈິງເອົາຈັງ ເຮັດໄປພໍໄດ້ອາສັຍໝູ່ຍາມເພິ່ນ ມີປັນຫາທາງດ້ານຄອບຄົວ ຖ້າເວົ້າເຖິງເຣື່ອງເງິນຄຳ ເພື່ອຈະ ຣົບໂຣມກັນໄປຊ່ວງວຽກສັງຄົມ ແມ່ນມູບລົງທັນທີ ຫຼືບໍ່ກໍແລ່ນໄປນັ່ງຢູ່ແຈຝາໂລດ ເພາະຄວາມສົງໄສວ່າແຕ່ໝູ່ຄນະຈະຕົວະເອົາເງິນເພິ່ນ, ຄົນພວກນີ້ບໍ່ສມາຖເປັນເຈົ້າຕົນເອງໄດ້.

ດັ່ງນັ້ນຖ້າທ່ານໃດ ຫາກເຫັນວ່າຕົນເປັນຄົນມີແນວຄິດລັ່ງເລສົງໄສ ແລ້ວໃຫ້ທັນປຸງນໄວໆ ຄືໃຫ້ເອົາຫູໃຊ້ຟັງເພື່ອພິຈຣຕາແລ້ວໃຫ້ໃຊ້ຕາຂອງຕົນເອງທັງສອງໜ່ວຍເພື່ອສັງເກດການ ພ້ອມດຽວກັນກໍຕ້ອງລາຽງານໃຫ້ສມອງຮູ້ຢ່າງຈະແຈ້ງ ເພື່ອຈະໄດ້ປັດຄຸ້ງ *ວິຈິກິຈສາ* ອອກ ແລ້ວບັງຄັບໃຫ້ໃຈເປັນເຈົ້າຕົນເອງ, ເຮັດທຸກສິ່ງທຸກຢ່າງດ້ວຍການຕັດສິນໃຈ, ຖ້າບໍ່ລົງມືກະທຳດຽວນີ້ ເຮົາຈະເຮັດເວລາໃດ ?, ຖ້າໃຜອີກ ແລະຈະເຮັດກັບໃຜ ?.

ຖ້າທ່ານເຫັນຄົນອື່ນທີ່ມີແນວຄິດອັນບໍ່ແນ່ນອນນັ້ນ ທ່ານບໍ່ຄວນ

ຈະໄປພົວພັນແລະບໍ່ຄວນຈະໃຫ້ການຊ່ວຍທັງດ້ານແນວຄິດ ຫຼືເຣື່ອແຣງແລະຊັພຍ໌ສົມບັດໃດໆທັງນັ້ນ.

***໓/. ສີລພັຕຕປຣາມາສ :*** ( ປ. ສີລພັຕຕປຣາມາສ ) ແປວ່າ ຄວາມເຊື່ອຖືວ່າມີສິ່ງສັກດິ໌ສິທຣ໌ ຈົນກາຽມາເປັນຮີດຄອງປະເພນີຂອງພວກເຮົາເທົ້າທຸກວັນນີ້, ຍ້ອນວ່ານັກປຼາຊຍ໌ອາຈາຣຍ໌ບາງທ່ານໄດ້ຂຽນໄດ້ແຕ່ງຕຳນານຕ່າງໆໄວ້ ດ້ວຽອຸບາຽເພື່ອໃຫ້ຄົນເຮົາເຄົາຣົພຢຳແຢງວ່າມີສິ່ງສັກດິ໌ສິທຣ໌ແທ້ ຫຼື ກໍມາຈາກຄວາມເຊື່ອຂອງຄົນໂບຣາຓ ທີ່ຍັງບໍ່ຮູ້ເຫຕຸຜົລ ຈຶ່ງພາກັນເຊື່ອວ່າຢູ່ໃນພືນແຜ່ນດິນ ປ່າດົງພົງໄພ ທັງຫຼາຽລ້ວນເຕັມໄປດ້ວຽເທພເຈົ້າ, ນາຄເງືອກ, ທີ່ມີຣິທຣ໌ມີອຳນາຈທັງນັ້ນ ຕົວຢ່າງນຄອຣວຽງຈັນທນ໌ ຊຶ່ງເປັນເມືອງຫລວງຂອງປເທສລາວ ທຸກວັນນີ້ກໍຍັງມີຄົນເວົ້າລືມກັນຢ່າງໄຮ້ເຫຕຸຜົລທີ່ສຸດ ພວກເພິ່ນເວົ້າສູ່ກັນຟັງວ່າ ນຄອຣວຽງຈັນທນ໌ແຕ່ກ່ອນໆ ເປັນເມືອງຂອງພຼະຍານາຄມາສ້າງໃຫ້ ແລະເມືອງນີ້ບໍ່ມີໃຜຈະມາຮົບເຮວໄດ້ ເພາະວ່າມີພຼະຍານາຄຊ່ວຽປ້ອງກັນທຸກດ້ານ ຕໍ່ມາເລີຽມີສັຕຣູໃຊ້ອຸບາຽລໍ້ລວງເອົາພຼະຍານາຄເຂົ້າຮູ ເພື່ອບໍ່ໃຫ້ພຼະຍານາຄອອກມາ ຈຶ່ງສ້າງພຼະທາຕຸຫຼວງກວມໄວ້. ຫຼັງ-

ເຊືອກມັດຄໍ ຂອງພວກເຮົາ    ຣົບໂຣມ ໂດຽ ຈັນທະນະ

ຈາກນັ້ນ ນຄອຣວຽງຈັນທນ໌ ກໍຖືກສັຕຣູທຳລາຽໄດ້ຢ່າງສະບາຽ. ຄຳຊ່າລືແບບງົມງາຽນີ້ ຈິນມີກອຣລຳໄວ້ດັ່ງນີ້.

□ ແຕ່ກ່ອນວຽງຈັນທນ໌ພາມີໜ້າ    ນາຄານາຄຊ່ວຽ
ຄົນວ່າກາຣອັນໃດມີແຕ່ນາຄເລດຍ້ວຽ    ບິນຂຶ້ນໝື່ນພະລື
ເບິ່ງມັນມືດອື້ຕ    ມື້ລະໝື່ນບິນຫາ
ບໍ່ມີໃຜຊິອາຈມາເຣວຣົບ    ຍາດເອົາເຮົາໄດ້
ຄາວຊິເສັຽໄຊຍ໌ໃຫ້    ໄທຍສຍາມ ດາກກ່ຳ
ເພາະມັນຊະນະດ້ວຽ    ບັກຊຽງໝ້ຽງສ່ຽງທາຽ
ພາໃຫ້ເກີດເຫຕຸຮ້າຽ    ຍ້ອນມັກຣ່າສິທະນິນໄຊຍ໌
ໄທຍເລິຽມາຍ່ຍິກ    ວ່າຊຽງຫຼວງເຈົ້າ
ຄາວເຂົາເອົາຫົວລ້ານ    ຊິນກັນນັ້ນຄັ້ງໜຶ່ງ
ສອງກັບ ໄທຍບໍ່ໄປຊ່ວຽພຼະຍາໝ້າມ້າ    ປາງນັ້ນກໍແມ່ນມັນ
ສາມກັບຄັ້ງ    ຍາດແຍ່ງວຽງຈັນທນ໌
ກໍເພາະປັນຍາມັນ    ຜູ່ຍຽວຫຽວຄ້າ
ຈຶ່ງໄດ້ນຳເມືອງໃຫ້    ມັນກິນເຄິ່ງໜຶ່ງ
ໄທຍອາສັຍຊຶ່ງຍ້ອນ    ບັກຊຽງໝ້ຽງຊູ່ອັນ

ສໍາພໍບາດພັນຕາງກະໂຫຼກພັນນັ້ນ ເອົາຟອກແທງທອງຄໍາ
ນໍາໄປເປັນພົງຄົລ ຊົ່ວຫຼານເຫຼນຫຼ້ອນ
ໃຜພູ່ສົມພອຣກ້າ ເຕຊາແຂງກັ່ນ
ຍົກໃຫ້ພັນຜູ່ນັ້ນ ເປັນເຈົ້ານັ່ງເມືອງ
ຕ້ອງລ້າງຫົວພັກຊຽງໝຽງ ມາກິນເສັງກ່ອນ
ຈຶ່ງຊິຫາງເຫດຸຮ້ອນ ເຂັນຂ້ອນບໍ່ຕາມ.

ຄໍາເວົ້າທັງໝົດທີ່ກ່າວມານັ້ນ ແມ່ນເຊື່ອກັນແບບງົມງາງ ແລະ ຂາດເຫດຸຜົລຫຼາງທີ່ສຸດ. ບັດນີ້ເຮົາເອົາຄໍາຊາລີກັນນີ້ມາເປັນອຸປະກອຣການສຶກສາເບິ່ງວ່າພັນພີຄວາມຈິງຫຼາງປານໃດ. ໃນນັ້ນເພິ່ນໄດ້ເວົ້າວ່າ ແຕ່ກ່ອນບໍ່ມີປະເທສໃດ ຈະສາມາຖຣົບກັບຊາວນຄອຣວຽງຈັນທນ໌ ເພາະວ່າມີພູະຍານາຄຄອງຊວງເຫຼືອຢູ່ຕຼອດພ້ອມທັງມີຣິທທິແລະອໍານາຈເໜືອກວ່າມະນຸສຍ໌ ຕໍ່ມາຊຽງໝຽງລໍ້ລວງເຂົ້າໃນຮູ້ແລ້ວສ້າງທາຕຸດໍາ ຫຼືວ່າທາຕຸຫຼວງ ຕົ້ນປາກຣູ ພູະຍານາຄຈຶ່ງອອກມາປ້ອງກັນແລະຊ່ວຍນຄອຣວຽງຈັນທນ໌ບໍ່ໄດ້. ເມື່ອຟັງໃຫ້ດີແລ້ວ ພັນກໍເປັນເຣື່ອງຕລົກ ຖ້າວ່ານາຄໂຕນັ້ນມີຣິທທິແທ້ ເປັນຫຍັງຈຶ່ງອອກມາບໍ່ໄດ້, ຖ້າຕີວ່າຄາທາຕຸຫຼວງຕົ້ນປາກຣູ ເປັນຫຍັງ

ນາຄໂຕນັ້ນ ຈຶ່ງບໍ່ເຈາະຮູອອກທາງໃໝ່ ໆ. ຖ້ານາຄເຮັດບໍ່ໄດ້ກໍ່ສະແດງວ່າພູະຍານາຄຂີ້ໂງ່, ນາຄຂີ້ກາກ. ຜູ້ທີ່ເຊື່ອວ່າຍັງມີພູະຍານາຄຢູ່ໃຕ້ກ້ອງທາດຸຫຼວງນັ້ນ ກໍເປັນບ້າຄືນໂງ່ແບບດຽວກັບພູະຍານາຄນັ້ນເອງ.

ໃນປັດຈຸບັນນັກຄົ້ນຄົ້ວ ເພິ່ນສມາຖຄົ້ນພົບຊາກຮ່າງກະດູຂອງສັດວ໌ທີ່ຕາງໄປນານໄດ້ ໖໔ ລ້ານປີ, ຈົນໄດ້ນຳມາປະກອບກັນໃຫ້ເປັນຮູບຮ່າງຂອງສັດວ໌ແຕ່ລະປເພທ. ເຊັ່ນກະດູກຂອງ ໄດໂນຊົວຣ໌ (Dinosour) ສັດວ໌ທຸກຢ່າງທີ່ມີຢູ່ພື້ນນ້ຳມະຫາສມຸທ ພວກເພິ່ນເຫັນໝົດ ແຕ່ບໍ່ເຫັນພູະຍານາຄທີ່ຢູ່ໃຕ້ກ້ອງທາດຸຫຼວງ ກໍສະແດງວ່າມັນບໍ່ມີ.

ສິລພັຕຕະປະຣາມາສະ ຄວາມເຊື່ອແບບງົມງາຽ ເປັນອັນຕາຽຫຼາຽ ແລະຢ່າໄປຄຶດວ່າຈະມີເທພຍາດາທັງຫຼາຽ ຈະມາຊ່ວຽສ້າງປະເທສລາວ ຖ້າພວກເຮົາຕ້ອງການໃຫ້ປເທສລາວເປັນເອກຣາຊ ພວກເຮົາກໍສາມັຄຄີກັນ ທັນປາງປືນຍິງຫົວແກວ ສ້າງປັນຫາໃຫ້ເກີດຂື້ນຢູ່ໃນປເທສລາວ ທຸກຄົນຕ້ອງຄິດວ່າແກວ ແມ່ນສັຕຣູທີ່ໝາງເລຂ ໑. ເຮົາຕ້ອງອາສັຍເຮົາເອງ ຢ່າໄປຄິດຫາອາສັຍຄົນ-

ອື່ນ ແລະຢ່າໄປຄິດອາສັຍສັຕວ໌ດຽຣະສາຣອີກ.

*໔/. ກາມຣາຄະ* : ອ່ານ ກາມະຣາຄະ ( ປ. ກາມຣາຄ) ຄວາມເຫັນແກ່ອຳນາຈຂອງກາມ ເຊ່ນການຫຼິ້ນແສ້ພານສາວ ຫາເອົາເມັຽນ້ອຽຫ້ອຽເມັຽປາງໄປເລື້ອຽໆ ເຊື່ອກັມດຳເສັ້ນນີ້ ແມ່ນສຳຄັນຫຼາຽ ຖ້າຄອບຄົວໃດຖືກ ກາມະຣາຄະ ເຂົ້າຄອບຄອງໃນຕົວແລ້ວ ຄອບຄົວນັ້ນຕ້ອງແຕກຫັກຢ່າງບໍ່ຕ້ອງສົງໄສ ຊັພຍ໌ສົມບັຕທີ່ພາກັນຊອກມາຫາໄດ້ດ້ວຽເຣື່ອແຮງ ກໍຕ້ອງຫາງສາບສູນຍ໌ໄປຢ່າງບໍ່ມີເຫຕຸຜົລ, ສ່ວນລູກເຕົ້າກໍຕ້ອງຂາດທີ່ເພິ່ງພາ ເຖິງເຂົາຈະຢູ່ນຳແມ່ ຫຼື ຈະໄປຢູ່ນຳພໍ່ກໍຕາມ ແຕ່ເດັກນັ້ນຍັງຂາດການເບິ່ງແຍງຫຼາຽອັນ ແລະຍັງຂາດການໂອບໂລມຢູ່ຫຼາຽຢ່າງ.

ທີ່ເວົ້າມາທັງໝົດນັ້ນ ແມ່ນສະເພາະຄົນທັມມດາສາມັນຄືພວກເຮົານີ້ແຫຼະ. ຖ້າເປັນພວກຜູ້ນຳພາປະຊາຊົນ ແທ້ງເປັນເຣື່ອງໜັກໜ່ວງໄປກວ່ານັ້ນອີກ ເຊັ່ນຜູ້ນຳຂອງລາວ ຍ້ອນເຫັນແກ່ອຳ-ນາຈທາງກາມຣາຄະ ຈຶ່ງໄປຫຼົງຄວາມງາມຂອງສະຕຼີເພດ ຂອງຄົນຕ່າງຊາຕິ ຈົນໄດ້ເອົາປເທສລາວໄປມອບໃຫ້ແກວ ນັ້ນເປັນບົທຮຽນໃຫ້ພວກເຮົາ ບໍ່ຄວຣເບິ່ງຂ້າມ. ຖ້າຜູ້ໃດຫາກບໍ່ສາມາຖເອົາ

ເຊືອກມັດຄໍເສັ້ນນີ້ອອກຈາກຕົນໄດ້ ກໍຢ່າເວົ້າເຖິງເຣື່ອງການປົດປ່ອຽຊາຕິ.

*໔/. ປຕິຄະ :* ອ່ານ ປະຕິຄະ ( ປ. ປຏິຆະ ) ຄວາມຢ້ານ ຄວາມຢ້ານນີ້ກໍມີຢູ່ສອງປະເພທຄື: ກ/. ຢ້ານຕາຽ ຈະເຮັດຫຍັງກໍຢ້ານຕາຽກ່ອນ, ຢ້ານໝູ່ມາຕິວະຍິວະເອົາສິ່ງຂອງທີ່ຕົນມີໄວ້, ຢ້ານທຸກຂ໌ ຯລຯ.

ຂ/. ຢ້ານບໍ່ ( ໝາຽຄວາມວ່າ ຢາກໄດ້ຫຼາຽທີ່ສຸດ ) ຢ້ານບໍ່ຣັ່ງ ຢ້ານບໍ່ມີ, ຢ້ານບໍ່ຄືໝ້າຄືຕາ, ຢ້ານບໍ່ໄດ້ມີຊື່ສຽງ, ຢ້ານຄົນບໍ່ນັບໝ້າຖືຕາ ເຮັດຫຍັງກໍຕ້ອງການແຕ່ຍົສ ເຊືອກມັດເສັ້ນນີ້ກໍເຮັດໃຫ້ຄົນມີປັນຫາຫຼາຽພໍສົມຄວຣ.

ເຊືອກມັດຄໍ ຫຼືມັດຊອກທັງ ໔ ເສັ້ນນັ້ນ ທີ່ຂພະເຈົ້າສົມຫຽບມາຈາກ ສັງໂຍຊນ໌ກິເລສ ພຼະພຸທຣະເຈົ້າສອນວ່າເປັນສັງໂຍຊນ໌ກິ-ເລສ ຊັ້ນຕ່ຳ ທີ່ເຮັດໃຫ້ຄົນເຮົາໄປບໍ່ລອດຈາກວັຕສົງສາຣນີ້. ຖ້າບຸຄຄົລໃດຫາກຊອກຫາວິທີປົດປ່ອຽຕົນ ຈາກການເປັນທາສຂອງກິເລສນີ້ ກໍສາມາຖເຮັດໄດ້ ມະນຸສຍ໌ສາມາຖເຮັດໄດ້ທຸກຢ່າງ.

***ຝ/. ຣູປຣາຄະ :*** ອ່ານ ຣູປະຣາຄະ ຄວາມນັບຖືທີ່ເຫັນເປັນຣູປຣັມມ໌, ນັບຖືບຸຄຄົລ ຫຼືວ່າບູຊາບຸຄຄົລ. ການນັບຖືບຸຄຄົລນີ້ມີຢູ່ສອງຢ່າງຄື.

ກ/. ນັບຖືໃນຖານະເປັນຍາຕິພີ່ນ້ອງ ແລະໝູ່ຄູ່ທີ່ຮັກແພງກັນມາແຕ່ກ່ອນ. ຜູ້ທີ່ມີແນວຄິດນັບຖືບຸຄຄົລນີ້ ແມ່ນເປັນຄົນບໍ່ຮູ້ຫຍັງໝົດ ເພາະເພິ່ນບໍ່ໄດ້ພິຈຣຕາຫຍັງ ລໍ່ຖ້າແຕ່ຄົນຜູ້ທີ່ເພິ່ນນັບຖືນັ້ນ ເປັນຜູ້ອອກຄຳສັງ ແຕ່ລາງເທື່ອຄົນທີ່ເພິ່ນບູຊານັ້ນໄປກະທຳຄວາມຜິດຣະບຽບຂອງວົງສັງຄົມຈົນຈັບໂຕໄດ້ໄລ່ໂຕທັນ ເພິ່ນກໍ່ຍັງຍ້ອງວ່າເຂົາເປັນຝ່າຍຖືກຕ້ອງຢູ່ສເມີ.

ຂ/. ນັບຖືບຸຄຄົລໃນຖານະ ມີກະກຸລເປັນເຈົ້າໃຫຍ່ນາຍໂຕຈຶ່ງນຳບູຊາເຂົາ ຖ້າເຮັດວຽກຊາຕິ ກໍ່ຕ້ອງເຮັດນຳຜູ້ເປັນເຈົ້າເປັນນາຍ ເຖິງແມ່ນເຂົາໃຊ້ອຳນາຈປ່າເຖື່ອນສໍ້ຣາສບັງຫຼວງມາແລ້ວກໍ່ຕາມ ເພິ່ນຍັງແລ່ນນຳເຂົາຢ່າງບໍ່ມີວັນເຊົາ. ປເທສຊາຕິລາວເສົ້າໝອງກໍ່ຍ້ອນຄົນສ່ວນຫຼາຍນັບຖືບຸຄຄົລ. ປັຍຫານີ້ພວກເຮົາສົມຄວຣໄຕ່ຕ້ອງໃຫ້ຄັກ ກ່ອນຈະເຂົ້າຮ່ວມວຽກສັງຄົມຕ່າງໆນຳເຂົາ ຖ້າເຫັນແກ່ວ່າເຂົາເຄີຍເປັນເຈົ້າເປັນນາຍ ຄິດວ່າເຂົາຈະຮູ້ທຸກ

ສິ່ງທຸກຢ່າງນັ້ນ ແມ່ນເປັນແນວຄິດທີ່ຜິດພາດ ແລະນຳໄພຍ໌ອັນໃຫຍ່ຫຼວງມາສູ່ວົງສັງຄົມຂອງມນຸສຍ໌.

*ອຣູປຣາຄະ :* ອ່ານ ອະຣູປະຣາຄະ ຄວາມພໍໃຈນຳສິ່ງທີ່ບໍ່ເປັນຣັມມ໌ ( ອຣູປຣັມມ໌ ) ເຊັ່ນວ່າພໍໃຈໃນຄວາມສຸຂເວທນາ ດຽວນີ້ຊາວລາວຂອງພວກເຮົາ ທີ່ອົພຍົພມາຢູ່ປເທສທີສາມ ຫຼາຍຄົນມີຄວາມສະດວກສະບາຍຫຼາຍດ້ານ ຈົນກ້າເວົ້າວ່າມີຄວາມສຸຂກວ່າຢູ່ປເທສລາວຫຼາຍຮ້ອຍເທົ່າ ບາງຄົນຈົນກາຍເປັນຄົນລືມຕົວກໍມີຖົມເຖໄປ ຍ້ອນຄວາມສຸຂຄວາມສະດວກສະບາຍທີ່ເພິ່ນບໍ່ເຄີຍໄດ້ຮັບມາກ່ອນ ເຊັ່ນເຂົ້າປາອາຫານມີພຽງພໍ ມີຣົຖຂີ່ ມີເຄື່ອງບັຣເທີງ ມີໂທຣະສັພທ໌ ຍູຖ່າງໂທເວົ້າອວດອ້າງເຖິງຄວາມຮັ່ງຄວາມມີຂອງຕົນ ຈົນຫຼົງລືມຄວາມທຸກຂ໌ຍາກ, ຫຼົງລືມຄາວທີ່ຕົນໄດ້ຮັບການທໍຣມານ ຈາກພວກຜເດັດການຊາຕ ຫຼົງລືມຄາວທີ່ຕົນໄດ້ຮັບການທາຣຸຓ ( ທາຣຸນ ) ຈາກເຈົ້າໜ້າທີ່ໄທຍຫຼັງຈາກຫອບຊີວິຕລອດຕາຍຂ້າມນ້ຳຂອງມາແລ້ວ. ຫຼາຍຄົນຈົນຫຼົງລືມຄວາມຕັ້ງໃຈ ທີ່ຕົນປາຖນາໄວ້ແຕ່ເມື່ອກ່ອນ ເຊັ່ນວ່າຖ້າໄປຮອດປເທສທີສາມແລ້ວຈະພາໝູ່ຄູ່ເປັນຜູ່ຕໍ່ສູ້ເພື່ອ ເສຣີພາພ ເອກຣາຊ ປະຊາທິປະໄຕ.

ໃນປັຈຈຸບັນນີ້ ແມ່ນເວົ້າວ່າວຽກຊາຕການເມືອງນັ້ນບໍ່ຕ້ອງເວົ້າເຖິງພັນດອກ ພວກເຮົາມາເວົ້າເຣື່ອງຄວາມສຸຂສ່ວນຕົວນີ້ກ່ອນ ວັນເສົາ ວັນອາທິດນີ້ມີງານວັນເກີດຢູ່ເຮືອນໃຜ ?. ພວກເຮົາໄປຫຼິ້ນໄພ້ເກ, ຕີແຕ້ມແດງ ແລະແລດສະຕົບກັນດີກວ່າຈະໄປເສັຽເວລານຳວຽກບ້ານການເມືອງ.

ທັງໝົດທີ່ເວົ້າມານັ້ນ ແມ່ນຄວາມພໍໃຈນຳຄວາມສຸຂທີ່ບໍ່ເປັນຘັມມ໌ ຍ້ອນຄວາມບໍ່ເຂົ້າໃຈແຈ້ງໃນຄຳສອນຂອງພຼະພຸທຘເຈົ້າ ທີ່ໄດ້ສຳແດງໄວ້ ຈຶ່ງກາຽມາເປັນເຊືອກມັດຄໍ, ມັດແຂນ ແລະຂາ.

***<u>໑/. ມານະ :</u>*** ຖືວ່າຕົນເປັນຄົນສຳຄັນກວ່າໝູ່ທັງຫຼາຽ ຄືຖືວ່າຕົນເປັນຄົນມາຈາກກະກູລເຊື້ອຊາຕ ຯລຯ. ຖືວ່າຕົນເຄີຽເປັນເຈົ້າເປັນນາຽມາແລ້ວ, ຈຶ່ງບໍ່ສົນໃຈໄປເວົ້ານຳພວກເດັກນ້ອຽທີ່ເກີດໃຫຽ່ຍ້ອນກິນຫອຽກິນປູ ອັນລູກພໍ່ນາໝາເຕົ່າ ພົນບໍ່ມີນ້ຳຢາດອກ.

ເຊືອກເສັ້ນນີ້ອັນຕຣາຽຫຼາຽທີ່ສຸດ ຈົນເຮັດໃຫ້ພວກເຮົາບໍ່ມີແຜ່ນດິນຢູ່ ແລະບໍ່ສາມາຖເຕົ້າໂຮມກັນໄດ້ ຍ້ອນຄວາມບໍ່ລົດລະບ້ວງມັດຄໍມັດແຂນຂໍ້ທີ ໑ ນີ້ເອງ.

***<u>໒. ອຸທຘັຈຈະ.</u>*** ຫລົງໄຫລນຳຄວາມມ່ວນຊື່ນ ຈົນກາຽໄປເປັນ

ນັກສຸຣາ, ນັກການພນັນ, ນັກຈັດງານວັນເກີດ ແຕ່ລະເສົາແຕ່ລະທິຕຍ໌ ມີແຕ່ເມົາກັບເມົາແລະມີແຕ່ເກົາກັບເກົາ ຫລັງຈາກເສັຍໝົດຕົນໝົດໂຕແລ້ວ ກໍເປີດກາຣາໂອເຄ (Karaoke) ຮ້ອງເພງໄທຍ໌ຢ່າງມີຄວາມສຸຂ ຈົນຫລົງລືມໄປວ່າລູກນ້ອຍຂອງຕົນນັ້ນເຮັດຫຍັງ ຢູ່ໃສແລະຢູ່ກັບໃຜ ໆ. ເມື່ອລູກຂອງຕົນໄປທຳສິ່ງທີ່ບໍ່ດີ ກໍ່ສ້າງຄວາມຊົ່ວເຮັດໃຫ້ຜູ້ເປັນພໍ່ແມ່ມີຄວາມອັບອາຍຂາຍໜ້າ ເພິ່ນຊ້ຳຕິວ່າລູກໄປຟັງຄວາມຄົນອື່ນ, ຄວາມຈິງແລ້ວແມ່ນພໍ່ແມ່ຕົກຢູ່ໃນຄວາມມ່ວນຊື່ນຈົນຫລົງຄອບຫລົງຄົວ, ຫລົງລືມຄວາມເຈັບແສບທີ່ຕົນໄດ້ຮັບຈາກພວກຜເດັຈການກຳອຳນາຈເຖື່ອນ, ຫລົງລືມຄວາມຕັ້ງໃຈເມື່ອກ່ອນວ່າຖ້າໄປຮອດອາເມຣິກາແລ້ວຈະຮຽນກາສາໃຫ້ໃຊ້ໄດ້ ແລະຈະຮຽນວິຊຊາການຕ່າງໆທີ່ຕົນມັກ. ອຸທທັຈຈະ ເປັນເຊືອກທີ່ສຳຄັນ ແລະມັດສອກມັດຄໍຂອງມນຸສໄວ້, ດັ່ງນັ້ນພວກເຮົາບໍ່ຄວຣມ່ວນເກີນຂອບເຂດ ມັນເປັນເຫຕຸແຫ່ງຄວາມທຸກຂ໌ຂອງຕົນ.

<u>໑໐. ອະວິຊຊາ</u> . ຄວາມໂງ່, ບໍ່ຮູ້ຄວາມຈິງ, ບໍ່ຮູ້ຈັກຜິດບໍ່ຮູ້ຈັກຖືກ ຈົນເປັນຕົ້ນເຫຕຸໃຫ້ສ້າງຄວາມຊົ່ວ ຄວາມໂງ່ຈ້ານັ້ນບໍ່ໄດ້ໝາຍເຖິງຜູ້ບໍ່ຮຽນໜັງສືເທົ່ານັ້ນ ແຕ່ຜູ້ທີ່ມີໃບປະກາສນີຍະບັຕ ເປັນຄົນ

ອວິຊຊາກໍ່ມີຫຼາຍ.

ຕາມໄດ້ຍິນໄດ້ຟັງຄົນລາວເຮົາ ມັກເວົ້າລົມກັນວ່າ ເຂົ້າປາອາຫາຣແລະຊັພຍ໌ສົມບັຕ ທີ່ເອົາໄປທານແລ້ວ ກິກຂຸແລະຄນະກັມກາຣ ເພິ່ນຈະເອົາໄປເຮັດຫຍັງທຳຫຍັງກໍ່ເປັນເຣື່ອງຂອງເພິ່ນ ຂໍແຕ່ເພິ່ນນຸ່ງຜ້າເຫຼືອງ, ສ່ວນຜູ່ທານກໍ່ຕ້ອງໄດ້ບຸນຍ໌.

ພວກທີ່ເວົ້າລົມກັນດັ່ງນັ້ນກໍ່ຍ້ອນວ່າ ຄວາມອະວິຊຊາ ນັ້ນເອງ ເປັນຕົ້ນເຫຕຸໃຫ້ຄິດຜິດ ບໍ່ມີເທພອົງຄ໌ໃດມາສ້າງໃຫ້ທ່ານເປັນຄົນອະວິຊຊາ, ເພື່ອປິດປ່ອຍຕົນອອກຈາກເຊືອກມັດຄໍເສັ້ນນີ້ ໃຫ້ອ່ານທຸກໜັງສືທີ່ທ່ານມີ ໃຫ້ຕັ້ງໃຈຟັງເວລາເພິ່ນເວົ້າເພິ່ນອະທິບາຍ ແລ້ວພິຈາຣນາອີກ.

ເຊືອກມັດຄໍ ໕ ເສັ້ນ ແຕ່ຂໍ້ທີ ໖-໑໐ ນີ້ ແມ່ນເຊືອກເສັ້ນໃຫຍ່ ພຣະພຸທທເຈົ້າວ່າສັງໂຍຊນ໌ເບື້ອງສູງ...

## *ນິທານສຸວສວາດ*

## *ພຣາມາສິດ*

## ຄອງຖ່ອຍຮ້າງພີ່ຢູ່ ໓ ປະການ

໑. ອັນວ່າ ເພິ່ນບໍ່ເອີ້ນ    ສູ່ເຈົ້າຢ່າຊິຂານ    ເດີ.
ຖ້າວ່າ ເພິ່ນບໍ່ວານ    ສູ່ເຈົ້າຢ່າໄປຊອຍ
ຄັນວ່າ ຢາກຊອຍແທ້    ໃຫ້ພິຈຣຕາ
ເຫັນສົມມາສົມຄວຣ    ຈິ່ງຄອຍລົງມືຊ້ວນ    ທ່ານເອີຍ.

໔. ເຈົ້າຢ່າໄດ້    ອິ່ມເພິ່ນຍໍໂຕ    ນັ້ນເດີ.
ເກີດມາ ໃນສົງສາຣ    ໂລກຄົນເຮົານີ້
ລາງເທື່ອມີ    ລາງເທື່ອກໍໄຮ້
ລາງເທື່ອໄດ້    ຊ້ຳເລົ່າພອຍເສັຽ    ແທ້ດີຫຼີ.

໓. ອັນໜຶ່ງ ພໍ່ແລະແມ່    ຄຣູບາອາຈາຣຍ໌
ເພິ່ນຫາກ ສອນໃຫ້ຮູ້    ຢ່າຕອບຖ້ອຍຖຽງຄວາມ ບໍ່ດີໃດ.

-ꞏ-ꞏ-ꞏ-

## ນິທານສຽວສວາດ

## ຄຳສັ່ງສອນຂອງພໍ່

໑. ໃຫ້ເຈົ້າພັນເຮືອໄວ້ ຫຼາຍລຳແຮທ່າ
ໃຫ້ເຈົ້າໝ່າເຂົ້າໄວ້ ຫຼາຍບ້ານທົ່ວເມືອງ

໒. ຍິງໃດຮ້າງສາຍຜົວຢ່າສົມສູ່ ຊາຍໃດສິກສາຍເທື່ອແລ້ວ
ຢ່າເຝື່ອກ້ຽວສຽວສທາງ.

໓. ທັນຕາແຂ້ວ ສັຕວ໌ສິ່ງເປັນງ່າ
ເອົາຍາເປັນຂອງແຂງ ຢ້າວເຮືອນທາງບ້ານ.

໔. ຖ້າມີຄົນຈາຕ້ານ ໄຂຄຳສັບສົ່
ເຈົ້າຢ່າຟ້າວເຊື່ອໝັ້ນ ຄຳເວົ້າແທ່ງເຂົາ
ໃຫ້ເຈົ້າເອົາໃຈຕັ້ງ ຟັງຜົລທາເຫດຸ
ຄົນແມ່ນສຳຣັຈຣູ້ ຢ່າຈາເວົ້າຕໍ່ໃຜ
ຄວຣໃຫ້ອຳຣະຫັສໄວ້ ໃນໃຈສງັດຢູ່
ຢ່າໃຫ້ຫູໝູ່ເພື່ອນ ຍິນຮູ້ຮ່ອຍນຳ ລູກເອີຍ.

!

## ແປຄຳສອນຂອງໄມ

໑. ຄຳວ່າ ໃຫ້ເຈົ້າພັບເຮືອໄວ້ ຫຼາຍລຳແຮທ່າ ໃຫ້ເຈົ້າໝ່າເຂົ້າໄວ້ ຫຼາຍບ້ານທົ່ວເມືອງ ແປວ່າ ໃຫ້ເປັນຄົນມີຈິດໃຈກວ້າງຂວ້າງ ຕໍ່ຍາດຕິພີ່ນ້ອງແລະສ້າງຄວາມຮັກແພງກັບຄົນທົ່ວໄປ.

໒. ຄຳວ່າ ຍິງໃດຮ້າງສາມຜົວຢ່າສົມສູ່ ຊາຍໃດສິກສາມເທື່ອແລ້ວ ຢ່າເຝື່ອຜັ້ນສຽວສຫາຍ ແປວ່າ ຄົນພວກນັ້ນແມ່ນເຈົ້າມາຣຍາ ຈະຫລອກລວງທ່ານດ້ວຍອຸບາຍຫຼາຍສິ່ງຫຼາຍຢ່າງ ດັ່ງນັ້ນບໍ່ຄວຣຈະໄປຄົດຄ້າສມາຄົມນຳພວກເຂົາ.

໓. ທັນຕາແຂ້ວ ສັດວ໌ສິ່ງເປັນງາ ເອົາມາເປັນຂອງແຂງຢ້າວເຮືອນທາງບ້ານ ຄວາມໝາຍວ່າ ໃຫ້ລ້ຽງໝາແລະແມວໄວ້ ແມວມີປໂຍຊນ໌ໃນການຂົບໜູ ເພື່ອບໍ່ໃຫ້ມັນກັດເຄື່ອງນຸ່ງຫົ່ມຫຼືພືຊພັນຄຕ່າງໆ ທີ່ເຮົາເອົາໄວ້ປູກຝັງ, ສ່ວນໝານັ້ນມີປໂຍຊນ໌ໃນການເຝົ້າເຮືອນ ເວລາມີຄົນແປກໜ້າເຂົ້າມາ ມັນກໍເຫົ່າເພື່ອເຕືອນໃຫ້ເຈົ້າຂອງຮູ້ເຫດການ.

໔. ຖ້າມີຄົນຈາຕ້ານ ໄຂຄຳສັບສົ່ ເຈົ້າຢ່າຟ້າວເຊື່ອໝັ້ນຄຳເວົ້າແຫ່ງເຂົາ ໃຫ້ເຈົ້າເອົາໃຈຕັ້ງຟັງພິລທາເຫດຸ ລັນແມ່ນ

ສຳເຣັຈຮູ້ ຢ່າເວົ້າຕໍ່ໃຜ ຄວຣໃຫ້ອຳຣະຫັສໄວ້ ໃນໃຈສງັດຢູ່ ຢ່າໃຫ້ຫູໝູ່ເພື່ອນ ຍິນຮູ້ຮອຍນຳ ລູກເອີຍ, ແປວ່າ ຢ່າເປັນຄົນຫູເບົາເປົ່າວ່າງ ກ່ອນຈະເຊື່ອຕ້ອງໃຫ້ພິຈຣຕາຫາເຫຕຸຜົລ ແລະ ຫ້າມບໍ່ໃຫ້ເວົ້າຄວາມລັບໃຫ້ຄົນອື່ນຮູ້ ແນວໃດສົມຄວຣເວົ້າເຮົາຈິ່ງເວົ້າ.

## *ປັນຫາສຽວສວາດ*

## *ຖາມນາງສະເພົາ*

໑. ຫາດອັນກາງຍາແລ້ວ    ກໍຍັງມີຫີນຫຼືບໍ່ ?

໒. ດົງດອນ ກາງຍານັ້ນ    ຍັງມີໄມ້ໃນປ່າດົກໜາ ຢູ່ບໍ່ ?

໓. ບ້ານເຮົາກາງຈິ່ມໃກ້    ມີຄົນເຝົ້າຢູ່ດອມ ບໍ່ນໍ ?

໔. ແລະ ຢູ່ໃນເມືອງນັ້ນ    ມີກະສັຕຍ໌ສ້າງ

ປົກຄອງຕົ້ມໄພ່ແນ່ບໍ່ ຫຼືວ່າ    ເມືອງຂີ້ໄຣ້ ບໍ່ມີເຈົ້ານັ່ງຄອງ.

໕. ໃນນຄອຣກວ້າງໃຫຍ່ນີ້    ມີຄົນເຖົ້າສາມຂາ ຢູ່ຫຼືບໍ່ ?

໖. ວັດທີ່ງາມໃຫຍ່ກວ້າງ    ມີພຣະເຈົ້າແດ່ບໍ່ນໍ ?.

*ໝາຍເຫດ* : ຫລັງຈາກທ້າວສຽວສວາດ ຖາມນາງສະເພົາດັ່ງນັ້ນ

ພວກຊາວສະເພົາທັງຫຼາຍ ກໍພາກັນຫົວຂວານ ພ້ອມທັງຕົບມືໃສ່ໜ້າ ແລະບາງສະເພົາເອງ ກໍຄິດວ່າທ້າວສຽວສວາດເປັນຄົນບ້າ ເພາະຄຳຖາມທັງໝົດນັ້ນຕ້ອງໄປດ້ວຍປັນຍາ ດັ່ງນັ້ນພວກທີ່ໄປນຳກັນຈຶ່ງບໍ່ເຂົ້າໃຈຄວາມໝາຍຂອງຄຳຖາມ.

ພວກເຮົາໃນປັດຈຸບັນນີ້ ກໍເໝືອນກັນ ພຽງແຕ່ເຮົາເວົ້າພາສາລາວໄດ້ຕາມທັມມະດາທີ່ເຮົາເກີດມາເປັນລາວ ແຕ່ຖ້າບໍ່ຮຽນບໍ່ຄົ້ນຄວ້າ ເຮົາຈະບໍ່ເຂົ້າໃຈໃນພາສາລາວ ທີ່ມີຄວາມໝາຍເລິກ ຖ້າຜູ້ໃດອ່ານທຸກໆໜັງສືທີ່ຕົນມີ ແລະຍາມພົບພໍ້ໝູ່ຄະນະໃນວົງສັງຄົມກໍຕັ້ງໃຈຟັງໃຫ້ຫຼາຍ ແລະໃຫ້ຈື່ເອົາສິ່ງໃດທີ່ເຫັນວ່າມີຄວາມສຳຄັນແລ້ວມາພິຈາຣະນາເບິ່ງ ຄວາມຮູ້ທາງການເມືອງກໍຈະຄ່ອຍເຂົ້າໃຈ, ຄວາມຮູ້ວ່າດ້ວຍເຫດຸຜົລ <u>ຕັກວິທຍາ</u> ກໍຈະມີຂຶ້ນ, ຄວາມຮູ້ວ່າດ້ວຍຈິດໃຈ <u>ຈິຕວິທຍາ</u> ແລະ <u>ປັນຍາ</u> ຄວາມຮູ້ອັນປະເສີຖ ນັ້ນຈະພາໃຫ້ເຮົາເຫັນທັມມ໌.

ການອ່ານໜັງສື ແມ່ນການຝົນສມອງຂອງຕົນເອງໃຫ້ແຫຼມຄົມແບບດຽວກັບເຮົາເອົາພ້າໄປຝົນໃສ່ຫີນ ພ້າດວງນັ້ນກໍຈະມີຄົມແລະສາມາຖ ໃຊ້ປາດຊິ້ນ ຫຼືຕັດໄມ້ກໍຂາດດີ.

ນາງສະຈິ່ງກ່າວວ່າ ດູຣາ ລູກຮັກພໍ່ເຮີຍ! ຄຳອັນນີ້ເຈົ້າຢ່າໄດ້ວ່າເຖີນ ເຮົາທັງຫຼາຍງນີ້ກໍພາກັນມາຄ້າຂາຂາຍຢູ່ໃນກາງນ້ຳກາງເກາະທີ່ນີ້ ລູກແລະເມັຽອັນຢູ່ພາງໜ້າ ເຂົາກໍກິຈກັມຄະລຳແທ້ ອັນນີ້ກໍໄດ້ຊື່ວ່າ ບູຣາຫວ່າໄວ້ແລ ຕົວບໍ່ກິນທ້ອງຊ້ຳຢາກ ຕົວບໍ່ປາກຫົວໃຈຍັງ ຕັ້ງແຕ່ນີ້ເມື່ອໜ້າເຈົ້າຢ່າກ່າວຫຼັງອີກເລີຍ.

<u>ນາງສະເພົາຕອບຄຳຖາມຕາມຄວາມໃຈຕົ້ນໆວ່າດັ່ງນີ້ :</u> ອັນວ່າຫາດອັນນີ້ກໍຫາກມີແຕ່ຫີນແທ້ແລ, ອັນວ່າປ່າໄພດົງດອນນີ້ກໍຫາກມີແຕ່ໄມ້ທັງມວນແທ້ດາງ, ອັນວ່າບ້ານກໍຫາກມີແຕ່ຄົນແທ້ແລ ຢູ່ໃນເມືອງຫຼວງກໍຫາກຄວຣມີເຈົ້າຜູ່ໜຶ່ງແທ້ແລ, ອັນວ່າຜູ່ເຖົ້າຜູ່ແກ່ນີ້ກໍຫາກຖືໄມ້ເທົ້າທຸກຄົນແລມາ ແລະວັດວາອາຣາມ ກໍຫາກມີແຕ່ພຣະເຈົ້າພຣະທັມມ໌ ແລະພຣະສົງຄ໌ເຈົ້າແທ້ດີຫຼີແລ. ຕັ້ງແຮກແຕ່ນີ້ໄປໜ້າ ເຈົ້າຢ່າກ່າວເຖີນ.

ເມື່ອນາງສະເພົາກັບມາເຖິງບ້ານ ກໍຈາຣະຈາດອມລູກແລະເມັຽແຫ່ງຕົນວ່າ: ດູຣາ ເຂີຍເຈົ້າທັງສອງແມ່ລູກ ເຮົາໄປຄ້າເທື່ອນີ້ກໍມີໂຊຄ ມີໝານ ແທ້ດີຫຼີ ແລະຍັງມີລູກກະດຸມພີ ( ກຸຕຸມພີ ) ຜູ່ໜຶ່ງຢູ່ໃນເມືອງພຣະຣານະສີພຸ້ນ ໄດ້ມາດອມພໍ່ດ້ວຽ ວ່າທ້າວຢາກ

ເຫັນຕ່າງປເທສວ່າດັ່ງນັ້ນ ພໍ່ກໍໃຫ້ມາດອມ ທີ່ວ່າຄຳປາກຕ້ານຈາ
ຣະຈາດີດັ່ງ ເປັນຜີບ້າສະເພີ້ແທ້ແລ ອັນວ່າຄຳປາກຈາຖາມ ອັນ
ບໍ່ຄວຣເວົ້າກໍມາເວົ້າ ພໍ່ກໍເຂົ້າໃຈແຕ່ຫັ້ນແລ.

ເມື່ອນັ້ນລູກສາວຫຼ້າ ຜູ້ຊື່ນາງສີໄວ ຈິ່ງຖາມພໍ່ວ່າ ດູຣາພໍ່ເປັນ
ເຈົ້າ ອັນວ່າຄຳປາກຕ້ານຈາຣະຈາເໝືອນດັ່ງເປັນຜີບ້າ ອັນວ່າພໍ່
ເປັນເຈົ້າບໍ່ເຂົ້າໃຈເປັນສິ່ງໃດນໍ ? .

## *ນາງສີໄວແປປັນຫາສຽວສວາດ*

໑. ຫາດທີ່ກາງຽມາແລ້ວ ກໍຍັງມີຫີນຫຼືບໍ? ແປວ່າ ແກ້ວລູກປະ
ເສີຖນັ້ນ ມີຢູ່ໃນຫາດນີ້ບໍ ເຊັ່ນແກ້ວບັບພາເຮືອງຮຸ່ງ, ແກ້ວມະນີ
ພຸ່ງຣັສມີ ແກ້ວທຸນມີຄ່າລົ້ນ ແກ້ວວະຊິຣະຫຼາກຫຼາຽປະກາຣ ອັນ
ວ່າແກ້ວທັງຫຼາຽຝູງນີ້ ມີແກ້ວມະນີໂຊສເປັນປະທານ.

໔. ດົງດອນກາງຽມານັ້ນ ຍັງມີໄມ້ໃນປ່າດົກໜາຢູ່ບໍ ?. ກໍແປ
ວ່າ ທ້າວຖາມຫາໄມ້ຈວງໄມ້ຈັນທນ໌ ຍັງມີຢູ່ໃນດົງດອນນີ້ບໍ?.
ເພາະວ່າໄມ້ຈວງໄມ້ຈັນທນ໌ນີ້ ເປັນໄມ້ທີ່ປະເສີຖກວ່າໄມ້ທັງຫຼາຽ.

໓. ບ້ານເຮົາກາງຈິ່ມໃກ້ ມີດິນເຝົ້າຢູ່ດອຍບໍ່ນໍ ?. ຄຳຖາມນີ້ແປວ່າ ບ້ານນີ້ມີຜູ້ຮູ້ສາຕຼສິລ, ແພທຍ໌ສາຕຼ ເພາະວ່າທ້າວຊອກຫາຜູ້ຮູ້ຣິດແຫ່ງຄອງພຣະທັມມ໌ ທັງໝໍຢາວິທຍ໌ມົນຕ໌ມວນພ້ອມ.

໔. ໃນເມືອງນັ້ນ ມີກະສັຕຍ໌ສ້າງປົກຄອງຕຸ້ມໃຜແນ່ບໍ່ ຫຼືວ່າ ເມືອງຂີ້ໄຮ້ບໍ່ມີເຈົ້ານັ່ງຄອງ. ທ້າວຖາມ ເພື່ອຢາກຮູ້ຈອມເຈົ້າແຜ່ນດິນ ອົງຄ໌ທີ່ຖືສິລໝັ້ນຄອງທັມມທິສຣາຊ ຜູ້ສລາດຕຸ້ມຄອງບ້ານໃຫ້ຢູ່ເປັນ.

໔. ໃນນຄອຣກວ້າງໃຫຍ່ນີ້ ມີຄົນເຖົ້າສາມຂາຫຼືບໍ່ ?. ອັນຄຳຖາມນີ້ ແມ່ນວ່າທ້າວຢາກຮູ້ຝູງເຖົ້າເປັນຄົນດີ ເຖົ້າຜູ້ມີສິລທັມມ໌ບຳເພັງແລງເຊົ້າ ຜູ້ທີ່ຖືເອົາແກ້ວສາມປະການເປັນທີ່ເພິ່ງ ທຸກຄ່ຳເຊົ້າຄົນເຖົ້າບໍ່ໄລ.

໖. ວັດທີ່ງາມໃຫຍ່ກວ້າງ ມີພຣະເຈົ້າແນ່ບໍ່?. ອັນນີ້ທ້າວຫາກຖາມເຖິງຮູບ ພຣະພຸທຘເຈົ້າໃນເຂຕອາຣາມ ຮູບສາຣີກະທາຕຸແລະເຈດີ ພ້ອມທັງຖາມເຖິງໄມ້ ໂພສີເອົາຄວາດຮູບ ພຸທຘເຈົ້າໃສເຫຼື້ອມເບິ່ງງາມ.

ຫລັງຈາກລູກສາວໄດ້ແປຄຳຖາມໃຫ້ພໍ່ຮູ້ໝົດແລ້ວ ນາງສະເພົາ

24/VII ห้ามจำหน่าย

ຈຶ່ງຮູ້ວ່າທ້າວເປັນຄົນສລາດ ມີຜຍາປັນຍາ ກໍໃຫ້ແຕ່ງງານກັບລູກສາວດັ່ງນີ້ແລ.

*ໝາຍເຫດ:* ກ. ໜັງສືສຽວສວາດ ເປັນໜັງສືຄຳສອນດ້ວຍກົນອຸບາຍຫລາຍຢ່າງ ແລະຄຳສອນທັງໝົດບໍ່ມີການລ້າສໄມສຳຫຼັບຄົນລາວຂອງພວກເຮົາ ຢູ່ໃນໜັງສືສຽວສວາດເຫຼັ້ມນັ້ນມີ ໗໐ ນິທານ ແລະມີ ໔໗໔ ໜ້າ, ແຕ່ເສັຽດາຽບາງນິທານກໍບໍ່ສາມາຖຈະອ່ານໄດ້ເພາະວ່າໂຕໜັງສືລົບ ຍ້ອນການຊຸກເຊື່ອງເພື່ອບໍ່ໃຫ້ສັຕຣູເອົາເຜົາໄຟຖິ້ມ ຜູ້ທີ່ຮູ້ຈັກຄຸນຄ່າຂອງໜັງສືນັ້ນຈຶ່ງໄດ້ເອົາເຊື່ອງໄວ້ເລົ້າເຂົ້າ ບາງໜ້າກໍຖືກເສັຽຫາຽໄປ ເຊັ່ນໃບຄຳແນະນຳຂອງຜູ້ຂຽນຂພະເຈົ້າຈຶ່ງບໍ່ຮູ້ວ່າພິມພ໌ປີໃດ ແຕ່ເຫັນມີຊື່ຜູ້ກວດທວນຄືນ ຄື ມຫາລຸນ ຈັນສົມພູ ແຕ່ຂພະເຈົ້າຄິດວ່າຕ້ອງພິມພ໌ໃນປີ ຄ. ສ. ໑໙໗໐ ຫຼື ໑໙໗໒ ເພາະຢູ່ໃນປຶ້ມ ອນຸສຣນ໌ ຂອງມຫາ ສີລາ ວີຣະວົງສ໌ ໄດ້ຂຽນວ່າ ເຣື່ອງສຽວສວາດພິມພ໌ຄັ້ງທີ ໑ ແມ່ນມຫາ ສີລາ ຂຽນດ້ວຍມື, ພິມພ໌ຄັ້ງທີ ໔–໗ ໃຊ້ຈັກພິມພ໌.

ຂ. <u>ຄ່ອງຖ່ອຽຮ້ຽງ ໗ ປະການ</u> : ຂພະເຈົ້າໄດ້ກ່າຽຈາກນິທານທີ ໔ <u>ເຣື່ອງ ຊ້າງ</u> : ຢູ່ໃນໜັງສືເຫຼັ້ມນັ້ນ ເພິ່ນໄດ້ຂຽນດັ່ງນີ້ .

(໑) ອັນນຶ່ງ ເພິ່ນບໍ່ເອີ້ນຢ່າຂານ ເພິ່ນບໍ່ວານຢ່າຊ່ອຍ ມັກຊ່ອຍ ແທ້ໃຫ້ພິຈາຣະນາ ທີ່ເພິ່ງຊ່ອຍຈຶ່ງຊ່ອຍ.

(໒) ອັນນຶ່ງ ພໍ່ແມ່ແລະຄູບາອາຈານ ສັ່ງສອນໃຫ້ຮູ້ ຢ່າຊຸຕອບ ຖ້ອຍຖຽງຄວາມບໍ່ດີແລ.

(໓) ອັນນຶ່ງຢ່າຂົ່ມເພິ່ນຍໍໂຕ ນັ້ນເນີ ເປັນຄົນມາໃນສົງສານນີ້ ລາງເທື່ອມີ ລາງເທື່ອໄຮ້ ລາງເທື່ອໄດ້ຊ້ຳເລົ່າພອຍເສັຽ ແທ້ດີຫລີ.

ຄ. ພໍ່ສັ່ງສອນສິສລຽວແລະສຽວສວາດນັ້ນ ໄດ້ກ່າງຈາກນິທານ ທີ ໓ ເຣື່ອງ ລູກນົກແຂກ ໜ້າ ໕. ເພິ່ນຂຽນໄວ້ດັ່ງນີ້:

(໑) ອັນວ່າ ຝັນເຮືອໄວ້ຫລາຍລຳແຮທ່າ ໝ່າເຂົ້າໄວ້ຫຼຽງບ້ານ ທົ່ວເມືອງ. ຄຳອັນນີ້ພໍ່ແມ່ແຫ່ງຕົນບອກໄວ້ ຄືວ່າໃຫ້ມີມິດສະຫາຍ ຫຼຽງແຫ່ງ ແລະໃຫ້ຮັກແພງກັນ. ອັນນຶ່ງ ໃຫ້ຮັກສາສາມກົກສາມ ປາຽອັນນຶ່ງຢ່າຂ້າຍັງສັດ ຢ່າລັກຂອງທ່ານ ຢ່າເສບເມັຽທ່ານ ຢ່າຕົວະລ່າຍ ຢ່າກິນເຫລົ້າພົ້ນປະມານເຖີ້ນ.

ງ. ປັນຫາສຽວສວາດ ຖາມນາງສະເພົາ ກ່າງຈາກນິທານທີ ໓ ເຣື່ອງລູກນົກແຂກ ໜ້າ ໖ ເພິ່ນດັ່ງນີ້:

(໑) ອັນວ່າ ດົງດອນ ອັນເຮົາກາຍມານັ້ນ ກໍຍັງມີໄມ້ບໍ່ເດ ?.

(໒) ອັນວ່າ ຫາດອັນກາຍມາແລ້ວນັ້ນ ກໍຍັງມີຫີນແດ່ ?.

(໓) ອັນວ່າ ບ້ານເຮົາກາຍມາຈີ່ມໃກ້ ກໍຍັງມີດີນບໍ່ເດ?.

(໔) ອັນວ່າເມືອງຫຼວງພຼະມະຫານະຄອນນີ້ ກໍຍັງມີເຈົ້າບໍ່ຈາ ?.

(໕) ອັນວ່າ ຜູ່ເຖົ້າເມືອງນີ້ ກໍຍັງມີສາມຂາຢູ່ບໍ່ຈາ ?.

(໖) ອັນວ່າ ວັດວາອາຣາມ ກໍຍັງມີພຣະເຈົ້າແດ່ ?.

ຕໍ່ໄປນີ້ຈະໄດ້ຄັດເລືອກເອົາຈາກຫຼາຍໆນິທານໃນໜັງສືສຽວ- ສວາດນັ້ນ ແລະຂຽນເປັນກອຣເພື່ອໃຫ້ສຳຜັສກັນໃນກາຣອ່ານ.

## ຜຍາສຽວສວາດ

໑. ຝູງນົກອ້ຽງກິນໝາກໂພຘ່ໄຣ. ໒. ແຊວງ ສຽງບໍ່ມີໂຕຣ້ອງ

໓. ແຊວງ ຣ້ອງໂຕດຽວໝົດໝູ່.

## ແປຄວາມໝາຍ

໑. ຝູງນົກອ້ຽງກິນໝາກໂພຘິໄຣ = ແປວ່າໄດ້ແກ່ປວງຊົນທັງ ຫຼາຍ.

໔. ແຊວງ ສຽງບໍ່ມີໂຕຮ້ອງ= ແປວ່າ ປວງຊົນຫຼາຍຄົນ ແຕ່ຫາຜູ້ເປັນຄົນດີບໍ່ມີ.

໓. ແຊວງ ຮ້ອງໂຕດຽວໝົດໝູ່= ແປວ່າ ຢູ່ໃນສັງຄົມນັ້ນກຸ່ມນັ້ນ ຖ້າມີຜູ່ໜຶ່ງກະທຳໄດ້ດີ ກໍຄືໜ້າຄືຕາໄປໝົດທຸກຄົນ, ແຕ່ຖ້າມີຜູ່ໜຶ່ງກະທຳສິ່ງທີ່ຊົ່ວຮ້າຍ ຄົນໃນກຸ່ມນັ້ນສັງຄົມນັ້ນກໍ່ຊົ່ວໄປນຳກັນໝົດ.

## ປັນຫາສຽວສວາດ

*ນິທານທີ ໓໐ ເຣື່ອງ ກ້ຳມ້າໝາກສ້ານ ໜ້າທີ ໔໕໓...*

ຍັງມີພູ່ະບາທເຈົ້າ ອົງຄ໌ເອກຈອມກະສັຕຍ໌
ສເວີຍເມືອງພາຣາໜະສີ ຢ່າງສະບາຍເບົາເນື້ອ
ພ້ອມທັງບຸດີນ້ອຍ ສາມສາວງາມສງ່າ
ນາງນາຖນ້ອຍ ງາມກ້ຳເກິ່ງກັນ
ຕ້ອນນັ້ນຍັງມີໂຄໂບ ຮ້າຍງົວໂພງພິເພດ
ມັນຫາກມີຣິທຄີກ້າ ຫາຂ້າໝູ່ຄົນ
ແລ້ວກໍສົນຣະວົນຮ້ອນ ຊາວເມືອງໄຫວຫວັ່ນ
ຜູ່ໃດອອກຈາກບ້ານ ກວ່າຢ້ານສັ່ນສາຍ

ເມື່ອນັ້ນຍັງມີປຸຣິໂສເຊື້ອ    ສາມຊາຍເດີນທ່ຽວ
ເຂົາກໍຄິດຢາກກ້ຽວ    ຊີມຊ້ອນລູກພຼະຍາ
ແລ້ວກໍພາກັນເຂົ້າທູລ    ຖາມມຫາຣາຊ ກ່ອນແລ້ວ
ຂໍເອົາສາມໝ່ນ້ອງ    ມາໄວ້ຮ່ວມຮຽງ ກ່ອນນາ
ສ່ວນວ່າຣາຊາເຈົ້າ    ບໍ່ຂືນຄຳຈັກຢ່າງ ທ້າວເອີຍ
ແຕ່ວ່າ ໃຫ້ສູ່ພາກັນຂ້າ    ງົວໂພງເສັຍງກ່ອນ
ແລ້ວຈະຍໍຍົກໃຫ້    ນາງນ້ອງດັ່ງປະສົງຄ໌.

## ແປຄວາມປຽບທຽບຄືຈິຕຕ໌ແລະຮ່າງກາຍ

ເພື່ອໃຫ້ເປັນການຄົ້ນຄວ້າດ້ວຍຕົວທ່ານເອງ ຂພະເຈົ້າຈະສົມທຽບຂໍ້ທີ໑ ໃຫ້ເປັນຕົວຢ່າງ ນອກນັ້ນແມ່ນໃຫ້ທ່ານຜູ່ອ່ານປຽບທຽບເອົາເອງ.

໑. ຍັງມີພຼະບາທເຈົ້າອົງຄ໌ເອກຈອມກສັຕຍ໌ ສເວີຍເມືອງພາຣາຕະສີຢ່າງສະບາຍເບົາເນື້ອ :

<u>ເຊືອກພັດຄໍ ຂອງພວກເຮົາ ຣິບໂຣມ ໂດຽ ຈັນທະນະ</u>

<u>ພຼະບາທເຈົ້າອົງຄ໌ຈອມກະສັຕຍ໌</u>= ປຽບທຽບຄືດວງຈິຕຕ໌ຂອງເຮົາ.

<u>ສເວີຽເມືອງພາຣາຓະສີ</u> = ປຽບທຽບຄື ຣ່າງກາຽຂອງເຮົາ

ແປໄດ້ຄວາມວ່າ ດວງຈິຕຕ໌ທີ່ຢູ່ໃນຣ່າງກາຽຂອງເຮົານີ້ເອງ.

## <u>ຈົບປັຌຫາສຽວສວາດ</u>



## ການທຽບໜັງສືລາວໃສ່ກັບໜັງສືສັນສກຼິດ

ທີ່ມຫາແກ້ວ ຈັນທະສີຣິ ໄດ້ສົມທຽບໃຫ້ເປັນຕົວຢ່າງ.

| | | | | | |
|---|---|---|---|---|---|
| ກະ = क | ຂະ = ख | ຄະ = ग | ງະ = ं | ຈະ = च | ສະ = स |
| ຉະ = छ | ຨະ = श | ຊະ = ज | ຌະ = झ | ຍະ = ञ | ຎະ = ञ |
| ຕະ = त | ຐະ = ट | ຖະ = थ | ຑະ = ठ | ທະ = ड | ຒະ = ढ |
| ນະ = न | ຓະ = ण | ດະ = द | ຘະ = ध | ປະ = प | ຜະ = फ |
| ພະ = भ | ກະ = ब | ມະ = म | ຢະ = य | ຫະ = ह | ຣະ = र |
| ລະ = ल | ວະ = व | ຩະ = ष | | | |
| | | | | | |

**क.ममुणा** = ອ່ານວ່າ ກັມມຸຕາ

**कुककुता ऋदना पुतता** =ອ່ານ ກຸກກຸຕິ ອທນີ ປຸຕຕາ

ດ້ວຍເຫດນີ້ເອງ ມຫາແກ້ວ ຈຶ່ງໄດ້ອອກແບບພຍັນຊນະລາວ ໑໔ ເພື່ອໃຫ້ຖືກຕ້ອງກັບໄວຍາກຣຕ໌ລາວ ທີ່ມຫາສີລາ ແຕ່ງ ໃນປີ ໑໙໓໕. ແລ້ວຕື່ມພຍັນຊນະໃສ່ອີກ ໑໔ ຕົວ.

# ພາສິຕລາວບູຣານ.

ຄົນໄດ້ ຍິນຄຳເວົ້າຂົມໃນໆຢ່າຟ້າວຈົ່ມ ລາງເທື່ອຂົມຂົ້ນເຜັ້ຽ ພາຽໜ້າຫາກຊິດີ.

ຢ່າຟ້າວຕິຕຽນເວົ້າ ຜັກກະເດົາຂົມຄື່ນ ໄດ້ກິນກັບລາບກ້ອຽ ຊິຫຼົງຍ້ອງວ່າດີ.

ຊື່ວ່າແນວເດັກນ້ອຽຕາກ່ໆ ແນວຄຶດໝໍ່ ໄດ້ ກ. ຂ. ຂໍ້ຫຼ້ຽຄວາມເວົ້າຢູ່ດາວ.

ຊື່ວ່າແນວຄວາມເວົ້າຂອງຄົນມັນເກີນງ່າຽ ໄດ້ທັງຫວ່າຽແລະປີ້ນຄຳເວົ້າບໍ່ຢູ່ຄວາມ.

ຍາມເຂົາຮັກ ເຂົາກໍ່ຍ້ອງ ຍາມເຂົາຊັງ ເຂົາກໍ່ວ່າ ຄືດັ່ງມັກເຄົ້າເມົ້າໝາເຖົ້າເທົ່າແຕ່ເຂົາ.

ຫຼາຽຄົນເຂົ້າຫຼາຽພາຽຫາກຊິແລ່ນດອກມາ ຕົກສີພາຽໃຫ້ພ່ຳພ້ອມ ເຮືອເຈົ້າແຫ່ງແລ່ນໄວ.

ເຈົ້າຢ່າມົວເມົາຄັ້ນຄົນດຽວບໍ່ມີໝູ່ ບາດໄປພໍ້ໂຄ່ງຮ້າຽຊິຫຼົງຮ້ອງສະເດີຽດາຽ ທ່ານເອີຽ.

# ສາຣະບັນ

ປວັດຫຍໍ້ມຫາແກ້ວ......................ໜ້າ. ກ-ຈ.

ຄຳອຸທິສຈາກຄຽງຄິວ......................'' . ສ.

ສັງໂຍຊນ໌ ໑໐ ຢ່າງ......................'' ໑-໑໔

ນິທານສຽວສວາດ......................'' ໑໔-໔໗

ການທຽບໜັງສືລາວກັບໜັງສືສັນສກຣິດ..........''...໔໙

ກາສິດບູຣາຓ......................''....໓໐

ໜັງສືໃຊ້ໃນການຄົ້ນຄວ້າ.

ໜັງສື ສູດມົນຕ໌ນ້ອຍ ບັ້ນຕົ້ນ ໂດຍ ມຫາສິລາ ວິຣະວົງສ໌

ໜັງສື ນິທານສຽວສວາດ ໂດຍ ມຫາສິລາ ວິຣະວົງສ໌

ຕີພິມພ໌ ໂດຍ ທອງດີ ຈັນທະບາລ.

ຈັດພິມພ໌ ທີ່ໂຮງພິມພ໌ວັດລາວອໂສກຣາມ, ເມືອງໂຣແຈັສເຕີຣ໌

ຣັກນິວຢອກຄ໌, ໂດຍ ມຫາຈັນທ໌ເຕົ້າ ຈັນທະວົງສ໌. ປ.໙

# ໂຊຄຊາຕາກັຣມ໌

ຂອງລາວ

ທັງ ໃນອດີຕກາລ, ປັຈຈຸບັນນກາລ, ອນາຄົຕກາລ.

ກ່ຽງຈາກປຶ້ມ ປູ ປາ.

| | |
|---|---|
| ແລະເຫັນຟ້າມືດຕື້ມ | ຄນົງເນັ່ງບັງບົດ |
| ເຮົາສ່ອງແນມນຳຂອງ | ທ່າເວີນວັງກວ້າງ |
| ເຫັນແຕ່ອຶມຄຶມຟ້າ | ຍາມແລງລົມລ່ວງ |
| ພັດໝູ່ເມຄແລະເຟື້ອ | ໄຫລກົ້ວກ່ກວມ. |
| ບາງພ່ອງເປັນຊໍ່ຊ້ອງ | ເງື້ອມໂງ່ນງາມສເມີ |
| ບາງພ່ອງມີສັນສີ | ສີ່ງມອມເມີນຊູ້ |
| ຫຼີ່ງທ່າເວີນວັງກວ້າງ | ເຫັນເຮືອຂຶ້ນລ່ອງ |
| ລົມພັດຟອງຍວກຍູ້ | ຍິນສະອື້ນອ່ອນໃຈ !! |